**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຊຽງຂວາງ

ພະແນກກະສິກຳ ແລະ ປ່າໄມ້ ເລກທີ.1060.../ກປຂ

ຊຽງຂວາງ, ວັນທີ 20./05/2024

# ໜັງສືແຈ້ງເຊີນເຂົ້າຮ່ວມປະມູນ

- ອີງຕາມ ບົດບັນທຶກຄວາມເຂົ້າໃຈ ລະຫວ່າງກົມພັດທະນາຊົນນະບົດ, ກະຊວງກະສິກຳ ແລະ ປ່າໄມ້ ກັບ ອົງການກອຍກາ ປະຈຳ ສປປ ລາວ ໃນຄັ້ງວັນທີ 18 ພະຈິກ 2021, ຊຶ່ງໄດ້ຮັບການຊ່ວຍເຫຼືອລ້າ ຈາກລັດຖະບານ ສ. ເກົາຫຼີ ຜ່ານອົງການກອຍກາ;
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າແຂວງຊຽງຂວາງ, ສະບັບເລກທີ 42/ຊຂ, ລົງວັນທີ 18 ມັງກອນ 2024, ວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບການຈັດຊື້-ຈັດຈ້າງ ແລະ ຄຸ້ມຄອງກວດກາ ການຈັດຕັ້ງປະຕິບັດໂຄງການ ສູນບໍລິການສົ່ງເສີມການລ້ຽງສັດລາດແສນ ພາຍໃຕ້ໂຄງການສ້າງແຜນກິດຈະກຳພັດທະນາຊົນນະບົດ ເພື່ອສ້າງລາຍຮັບໃຫ້ຊົນນະບົດ ຢູ່ ແຂວງພາກເໜືອ ແລະ ພາກກາງ ສປປ ລາວ (ໂຄງການຂັ້ນແຂວງຊຽງຂວາງ) ທີ່ສະໜັບສະໜູນທຶນຈາກອົງການກອຍກາ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບທຶນຊ່ວຍເຫລືອລ້າ ຈາກລັດຖະບານ ສ. ເກົາຫຼີ ຜ່ານອົງການກອຍກາ ເພື່ອປະຕິບັດໂຄງການ ສ້າງແຜນກິດຈະກຳພັດທະນາຊົນນະບົດເພື່ອສ້າງລາຍຮັບໃຫ້ຊົນນະບົດ ເຂດພາກເໜືອ ແລະ ພາກກາງ ສປປ ລາວ. ໂດຍສະເພາະແຂວງຊຽງຂວາງ ໄດ້ຮັບງົບປະມານກໍ່ສ້າງ ແລະ ປັບປຸງ ສູນບໍລິການສົ່ງເສີມການລ້ຽງສັດລາດແສນ, ເມືອງຜາໄຊ. ສະນັ້ນ, ພະແນກກະສິກຳ ແລະ ປ່າໄມ້ ແຂວງຊຽງຂວາງ ຈຶ່ງຂໍຖືເປັນກຽດຮຽນເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີເງື່ອນໄຂເໝາະສົມເຂົ້າຮ່ວມການປະມູນ ໂຄງການກໍ່ສ້າງສູນສົ່ງເສີມການລ້ຽງສັດລາດແສນ(ກໍ່ສ້າງຫ້ອງການ, ປັບປຸງຫ້ອງທົດລອງ, ບ່ອນຈອດລົດ, ຄອກງົວ, ບ່ອນໝັກຫຍ້າງົວ, ບ່ອນຈອດລົດການກະເສດ-ສາງ ແລະ ປ້າຍໂຄງການ) ຂອງສູນສົ່ງເສີມການລ້ຽງສັດລາດແສນ ເມືອງຜາໄຊ ແຂວງຊຽງຂວາງ, ຊຶ່ງການປະມູນໂຄງການດັ່ງກ່າວ ແມ່ນມີເນື້ອໃນ ດັ່ງນີ້:

1. ການປະມູນຈະໃຊ້ຮູບແບບການປະມູນເປີດກວ້າງແບບສອງຂັ້ນຕອນ ຕາມກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ບົດແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019; ຊຶ່ງໄດ້ກຳນົດໄລຍະດຳເນີນຂະບວນການຈັດຊື້-ຈັດຈ້າງ ຄື:
   - ປະກາດແຈ້ງເຊີນ ໃຫ້ຜູ້ທີ່ມີຄວາມສົນໃຈມາຮັບເອົາເອກະສານດ້ານຄຸນນະວຸດ ເລີ່ມແຕ່ ວັນທີ 20 ພຶດສະພາ(5) ປີ 2024 ເປັນຕົ້ນໄປ;
   - ປິດຮັບເອກະສານ ດ້ານຄຸນນະວຸດ ເວລາ 15:00ໂມງ ຂອງວັນທີ 03 ມິຖຸນາ(6) ປີ 2024 ແລະ ຈະກວດກາດ້ານຄຸນນະວຸດ ໃນໄລຍະເວລາ 7 ວັນ;

- ແຈ້ງໃຫ້ບໍລິສັດທີ່ຜ່ານດ້ານຄຸນນະວຸດ ໃນວັນທີ 10 ເດືອນມິຖຸນາ(6) ປີ 2024 ເພື່ອໃຫ້ມາຮັບເອົາ ຮ່າງໃບປະເມີນລາຄາ ແລະ ແບບແຕ້ມ ໄປໃສ່ລາຄາ ເພື່ອຍື່ນເຂົ້າປະມູນ;
- ປິດຮັບຊອງປະມູນ ເວລາ 09.00 ໂມງ ຂອງວັນທີ 25 ເດືອນມິຖຸນາ(6) ປີ 2024;
- ເປີດຊອງປະມູນ ເວລາ 09.30 ໂມງ ຂອງວັນທີ 25 ເດືອນມິຖຸນາ(6) ປີ 2024 ຢູ່ສະຖານທີ່ ທີ່ກໍານົດໄວ້ໃນຂໍ້ 4 ລຸ່ມນີ້.

**ໝາຍເຫດ:** 1)ການຮັບ-ສົ່ງເອກະສານ ຈະບໍ່ອານຸຍາດຮັບ-ສົ່ງດ້ວຍລະບົບເອເລັກໂທຣນິກ, 2)ການຮັບເອກະສານ-ສົ່ງເອກະສານ ຈະມີການບັນທຶກລາຍຊື່ເພື່ອປະກອບເປັນເອກະສານລາຍງານ; 3)ເອກະສານປະມູນທີ່ສົ່ງຊ້າຈະຖືກປະຕິເສດ; 4)ຊອງປະມູນດ້ານຄຸນນະວຸດຈະຖືກກວດສອບໂດຍຄະນະກໍາມະການຈັດຊື້-ຈັດຈ້າງ ແລະແຈ້ງໃຫ້ຜູ້ເຂົ້າຮ່ວມປະມູນຮັບຊາບຜົນຕາມກໍານົດເວລາ; 5)ຊອງປະມູນດ້ານລາຄາຈະເປີດຕໍ່ສາທາລະນະໂດຍຊ່ອງໜ້າຄະນະກໍາມະການຈັດຊື້-ຈັດຈ້າງ ແລະ ຜູ້ເຂົ້າແຂ່ງຂັນປະມູນ ຫລື ຜູ້ຖືກແຕ່ງຕັ້ງ ຢູ່ສະຖານທີ່ໆກໍານົດໄວ້ຂ້າງລຸ່ມ;

2. ເງື່ອນໄຂດ້ານຄຸນນະວຸດ:
   - ຕ້ອງແມ່ນບໍລິສັດຖືກຕ້ອງຕາມກົດໝາຍ, ມີສິດດໍາເນີນທຸລະກິດການກໍ່ສ້າງໃນ ສປປ ລາວ;
   - ມີການມອບພັນທະອາກອນ ປະຈໍາປີ 2023;
   - ເປັນບໍລິສັດທີ່ເຄີຍຮັບວຽກກໍ່ສ້າງ/ປັບປຸງອາຄານ ທີ່ມີມູນຄ່າສັນຍາຫລາຍກວ່າ 200.000 ໂດລາສະຫະລັດ ຈໍານວນ 3 ສັນຍາ ຂຶ້ນໄປ ໃນໄລຍະ 7 ປີ ຜ່ານມາ (2017-2024) ແລະ ຕ້ອງມີໃບຢັ້ງຢືນຈາກເຈົ້າຂອງໂຄງການ;
   - ຕ້ອງມີເງິນໝູນວຽນໃນບັນຊີຢ່າງໜ້ອຍ 100.000 ໂດລາສະຫະລັດຂຶ້ນໄປ ຫລື ມີອັດຕາສ່ວນໜີ້ສິນໜ້ອຍກວ່າ 130% ທີ່ໄດ້ຈາກການຢັ້ງຢືນຂອງທະນາຄານ ຫລື ສະຖາບັນການເງິນໃດໜຶ່ງ ຊຶ່ງເອກະສານດັ່ງກ່າວຕ້ອງອອກໃນໄລຍະຫລັງຈາກວັນທີ່ໄດ້ແຈ້ງເຊີນປະມູນນີ້;
   - ຕ້ອງມີທີມງານວິຊາການທີ່ມີປະສົບການທີ່ແນ່ນອນ ຊຶ່ງບັນຊີພະນັກງານທີ່ໄດ້ຍື່ນມາ ຕ້ອງມີຢ່າງນ້ອຍ 2 ທ່ານ ແລະ ທັງ 2 ທ່ານຕ້ອງມີເງື່ອນໄຂ ແລະ ຜ່ານການປະເມີນ ເຊັ່ນ: ຫົວໜ້າວິຊາການພາກສະໜາມຕ້ອງມີປະສົບການກ່ຽວຂ້ອງຢ່າງນ້ອຍ 10 ປີ, ວິຊາການພາກສະໜາມ 1 ທ່ານ ຕ້ອງມີປະສົບການກ່ຽວຂ້ອງຢ່າງ ໜ້ອຍ 5 ປີ.
3. ບໍລິສັດທີ່ຕ້ອງການເຂົ້າຮ່ວມການປະມູນ ສາມາດພົວພັນເອົາເອກະສານດ້ວຍຕົນເອງ ຫຼື ມອບໃຫ້ຜູ້ຕາງໜ້າມາແທນແຕ່ຕ້ອງມີໃບມອບສິດຈາກບໍລິສັດ ແລະ ໃຫ້ສໍາເນົາເອກະສານໃບອະນຸຍາດດໍາເນີນທຸລະກິດ ຫຼື ໃບທະບຽນວິສາຫະກິດມາພ້ອມ; ກໍານົດຂາຍຊອງປະມູນ ໃນລາຄາ 2.000.000 ກີບຕໍ່ຊອງ, ຈໍານວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ການຊໍາລະຕ້ອງຈ່າຍເປັນເງິນສົດ;
4. ສະຖານທີ່ຊື້ຊອງປະມູນ-ເປີດຊອງປະມູນ ແລະ ທີ່ຕັ້ງໂຄງການ: ຢູ່ຂະແໜງພັດທະນາຊົນນະບົດ ພະແນກກະສິກໍາ ແລະ ປ່າໄມ້ ແຂວງຊຽງຂວາງ; ຖະໜົນຊຸນເຈືອງ, ບ້ານໂພນສະຫວ່າງ, ເມືອງແປກ, ແຂວງຊຽງຂວາງ;
   **ຕິດຕໍ່ພົວພັນ:** ທ່ານ ບຸນປອນ ວິວັນໄຊ ຜູ້ປະສານງານໂຄງການຂັ້ນແຂວງ.

ໂທລະສັບ: 020 23035555, 061 312142; Email: ponevivanxay@gmail.com;

ເລີ່ມແຕ່ ວັນທີ 20 ພຶດສະພາ(5) ປີ 2024 ເປັນຕົ້ນໄປ ໃນໂມງລັດຖະການ.

**ຫົວໜ້າພະແນກ**

ພະແນກ ກະສິກໍາແລະປ່າໄມ້ ແຂວງຊຽງຂວາງ

ທົງທອງ ພິມມະສານ